**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ເລກທີ 2482 /ກງ
ນະຄອນຫຼວງວຽງຈັນ, ວັນທີ 24 ສິງຫາ 2022

# ແຈ້ງການ

**ເຖິງ** : - ຜູ້ແຈ້ງພາສີທົ່ວໄປ ແລະ ຜູ້ບໍລິການແຈ້ງພາສີ
- ຜູ້ນໍາເຂົ້າ-ສົ່ງອອກ ສິນຄ້າ ຜ່ານດ່ານພາສີຊາຍແດນ
- ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນຂອບເຂດທົ່ວປະເທດ

**ເລື່ອງ**: ການນໍາໃຊ້ເອກະສານ, ຫຼັກຖານສໍາລັບການຊໍາລະຄ່າສິນຄ້າ ແລະ ບໍລິການ ທີ່ນໍາເຂົ້າ-ສົ່ງອອກ ກັບຕ່າງປະເທດ ຜ່ານທະນາຄານ ຢູ່ ສປປ ລາວ ເຂົ້າໃນໃບແຈ້ງພາສີເປັນລາຍລະອຽດ.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 03/ສພຊ, ລົງວັນທີ 10 ສິງຫາ 2021;
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021.

ເພື່ອຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ນະໂຍບາຍການເງິນ-ເງິນຕາຂອງລັດຖະບານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ຮັບປະກັນການຊໍາລະເງິນຕາຕ່າງປະເທດຜ່ານລະບົບທະນາຄານຢູ່ ສປປ ລາວ ໃຫ້ມີຄວາມຖືກຕ້ອງ, ຊັດເຈນ ແລະ ສາມາດກວດສອບໄດ້.

## ລັດຖະມົນຕີກະຊວງການເງິນ ອອກແຈ້ງການ ດັ່ງນີ້ :

1. ຜູ້ແຈ້ງພາສີທົ່ວໄປ ແລະ ຜູ້ບໍລິການແຈ້ງພາສີ, ຜູ້ນໍາເຂົ້າ-ສົ່ງອອກ ຕ້ອງປະກອບເອກະສານ, ຫຼັກຖານການຊໍາລະຄ່າສິນຄ້າ ແລະ ບໍລິການ ທີ່ນໍາເຂົ້າ-ສົ່ງອອກ ກັບຕ່າງປະເທດ ຜ່ານທະນາຄານດ້ວຍວິທີການຊໍາລະຕ່າງໆ ເຊັ່ນ: Letter of Credit-LC ຫຼື ລະບົບ Swift, CIPS ຫຼື ລະບົບການຊໍາລະອື່ນ ເຂົ້າໃນການແຈ້ງພາສີເປັນລາຍລະອຽດໃນລະບົບ ASYCUDA ໂດຍໃຫ້ບັນທຶກຊື່ທະນາຄານ (Bank`s Name), ວິທີການ

ຊຳລະ, ເລກທີ, ວັນທີ ທີ່ດຳເນີນທຸລະກຳ ອ້າງອີງໃນການຊຳລະຂອງທະນາຄານທີ່ໃຫ້ບໍລິການ ໃສ່ຫ້ອງຂໍ້ມູນທາງດ້ານການເງິນ ແລະ ທະນາຄານ (Financial and Banking Data/Transaction Reference Number) ໃນຫ້ອງທີ 28 ຂອງໃບແຈ້ງພາສີເປັນລາຍລະອຽດ. ກໍລະນີຜູ້ແຈ້ງພາສີ ບໍ່ປ້ອນຂໍ້ມູນໃສ່ຫ້ອງດັ່ງກ່າວ ລະບົບຈະບໍ່ຮັບຮອງການແຈ້ງພາສີໂດຍອັດຕະໂນມັດ;

2. ຜູ້ແຈ້ງພາສີທົ່ວໄປ ແລະ ຜູ້ບໍລິການແຈ້ງພາສີ, ຜູ້ນຳເຂົ້າ-ສົ່ງອອກ ສິນຄ້າຜ່ານດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ ຕ້ອງເປີດ ແລະ ນຳໃຊ້ບັນຊີເງິນຝາກສະເພາະ ເພື່ອຮອງຮັບການຊຳລະໃນການນຳເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ ກັບທະນາຄານທຸລະກິດ ໃນ ສປປ ລາວ ຕາມໃບອະນຸຍາດດຳເນີນທຸລະກິດຈາກຂະແໜງການທີ່ກ່ຽວຂ້ອງ, ຫ້າມນຳໃຊ້ບັນຊີສ່ວນຕົວ, ບັນຊີອື່ນ ຫຼື ບັນຊີອື່ນນອກລະບົບ ຢູ່ຕ່າງປະເທດເຄື່ອນໄຫວ ໂດຍບໍ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ;

3. ກ່ຽວກັບ ການນຳເຂົ້າ-ສົ່ງອອກຂອງສະຖານທູດ, ອົງການຈັດຕັ້ງສາກົນ, ການຊ່ວຍເຫຼືອລ້າ ແລະ ເງິນກູ້ຢືມຂອງລັດຖະບານ, ເຄື່ອງຮັບໃຊ້ໃນວຽກງານ ປກຊ-ປກສ, ການຜ່ານແດນສາກົນ, ການນຳເຂົ້າເພື່ອສົ່ງອອກຕໍ່ ແລະ ການຄ້ຳປະກັນ (IM8) ບໍ່ຈຳເປັນຕ້ອງປ້ອນຂໍ້ມູນດັ່ງກ່າວລົງໃນຫ້ອງທີ 28 ຂອງໃບແຈ້ງພາສີເປັນລາຍລະອຽດ;

4. ສຳລັບເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບຄຸ້ມຄອງການແຈ້ງ ຕ້ອງໄດ້ດຳເນີນການກວດກາທາງດ້ານເອກະສານ ແລະ ຫຼັກຖານ ກ່ຽວກັບການຊຳລະ ເຊັ່ນ: ຊື່ທະນາຄານ, ວິທີການຊຳລະ, ເລກທີ, ວັນທີ ດຳເນີນທຸລະກຳ ທີ່ອ້າງອີງໃນການຊຳລະ, ຊຶ່ງຜູ້ແຈ້ງພາສີ ໄດ້ຄັດຕິດກັບຊຸດເອກະສານໃບແຈ້ງພາສີເປັນລາຍລະອຽດ ແລ້ວສົມທຽບກັບ ຂໍ້ມູນໃນຫ້ອງທີ 28 ຂອງລະບົບ ASYCUDA ຈຶ່ງດຳເນີນການຮັບຮອງການແຈ້ງພາສີເປັນລາຍລະອຽດຕາມລະບຽບການ;

5. ມອບໃຫ້ກົມພາສີ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່ແນະນຳໃຫ້ຜູ້ແຈ້ງພາສີ, ຜູ້ບໍລິການແຈ້ງພາສີ, ຜູ້ນຳເຂົ້າ-ສົ່ງອອກ, ເຈົ້າໜ້າທີ່ພາສີ ແລະ ອົງການຈັດຕັ້ງສັງຄົມຮັບຊາບຢ່າງທົ່ວເຖິງ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດມີຄວາມຄ່ອງຕົວ ແລະ ມີປະສິດທິຜົນສູງ;

6. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 01 ຕຸລາ 2022 ເປັນຕົ້ນໄປ.

**ລັດຖະມົນຕີ**

ບຸນໃຈມ ອຸບົນປະເສີດ

**ບ່ອນນຳສົ່ງ:**

- ທ່ານ ຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳຂົງເຂດເສດຖະກິດ 01 ສະບັບ (ໃຊ້ຕາງລາຍງານ);
- ທ່ານ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 01 ສະບັບ (ໃຊ້ຕາງລາຍງານ);
- ທ່ານ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ 01 ສະບັບ (ເພື່ອຊາບ);
- ທ່ານ ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ 01 ສະບັບ (ເພື່ອຊາບ);